(ຕອນສາມ) ***ລະບຽບຂອງການເມືອງ ແລະວິກິດ***

**ສັງຄົມການເມືອງ**-ເກີດຂື້ນຈາກການທີ່ມີບຸກຄົນໆນື່ງ ຫຼືກຸ່ມບຸກຄົນກຸ່ມນື່ງມີອຳນາດເດັດຂາດ ໃນການຈັດລະບຽບການເມືອງ ສັງຄົມແລະເສຖກິດໂດຍຈັດຕັ້ງເປັນສະຖາບັນ ຊື່ງຄົນສ່ວນໃຫ່ຽ ຍິນຍອມ ຈະຢູ່ພາຍໄຕ້ສັງຄົມການເມືອງດັ່ງກາ່ວ ເນື່ອງຈາກຄວາມເກັ່ງກ໊ວຕໍ່ອຳນາດຂອງບຸກ ຄົນນັ້ນ ຫຼືເນື່ອງຈາກເປັນປະເພນີປະຕິວັດທີ່ທຳກັນມາ ຫຼືເນື່ອງຈາກຄວາມມີເຫດມີຜົນແລະຖືກ ຕອ້ງຕາມກົດໝາຽ ອັນເປັນທີ່ຍອມຮັບໂດຍທົ່ວໄປ

**ໃນສ່ວນຂອງລະບຽບການເມືອງ**-ທີ່ປະຊາຊົນຈຳໃຈຕອ້ງຍອມຮັບ ເພາະຈະມີຜົນໃນທາງລົບກະ ທົບຕໍ່ຕົນ ເຊັ່ນ ຖາ້ກະດາ້ງກະເດື່ອງກໍ່ຈະຖືກລົງໂທດ ດວ້ຍການຈຳຄຸກຫຼືຣຸນແຮງກ໋ວນັ້ນ ຖືໄດ້ ວາ່ເປັນພາວະຈຳຍອມ ແຕ່ກໍ່ຍັງມີລະບຽບການເມືອງນັ້ນຢູ່ ຕົວຢາ່ງ ເຊັ່ນ ລະບຽບການເມືອງ ທີ່ເກີດຂື້ນໃນປະເທດພະມາ້ຂນະນີ້ ສວ່ນລະບຽບການເມືອງທີ່ມາຕາມປະເພນີນັ້ນ ກໍ່ຄືລະບຽບ ການເມືອງການປົກຄອງ ຫຼືສັງຄົມການເມືອງທີ່ດຳລົງສືບເນື່ອງກັນມາ ແລະປະຊາຊົນສວ່ນໃຫ່ຽ ທີ່ຢູ່ໃນສັງຄົມການເມືອງນັ້ນ ຍອ່ມຮັບລະບຽບການເມືອງດັ່ງກາ່ວ ຕົວຢາ່ງ ເຊັ່ນ ການປົກຄອງ ສມັຍພຣະຣາຊອານາຈັກລາວວຽງຈັນ ຊື່ງມີການຈັດລະບຽບເປັນການປົກຄອງ ທີ່ມີສະຖາບັນ ພຣະມະຫາກະສັດເປັນສະຖາບັນຫລັກ ຕາມມາດຕຣາດວ້ຍລະບົບສັກດີນາ ລະບົບໄພ່ແລະອຸດົມ ການທາງການເມືອງ ຊື່ງມີສາສນາພຸທ ສາສນາພາມເປັນຖານ-ວຽງຈັນເປັນສັງຄົມການເມືອງ ທີ່ຢູ່ມາເຖິງ-300-ຫາ-400-ກ໋ວປີ ກອ່ນທີ່ຖືກແຜວເໜືອມາທຳລາຽ

**ໃນສວ່ນທີ່ກຽ່ວກັບລະບຽບການເມືອງ**-ຫຼື ສັງຄົມການເມືອງທີ່ສອດຄອ້ງກັບກົດໝາຽແລະຄວາມ ມີເຫດມີຜົນ ກໍ່ມີດວ້ຍຕົວຢາ່ງ ເຊັ່ນ ສະຫະຣັຖອະເມຣິກາ ຊື່ງມີການເລືອກຕັ້ງຜູ້ບໍຣິຫານສູງສຸດ ຄືປະທານາທິບໍດີແລະມີການເລືອກຕັ້ງ ສະພານິຕິບັນຍັດ ຣວມທັງໃນຝາ່ຍຕຸລາການ ຊື່ງ ມີໂຍງ ໄຍກັບປະຊາຊົນທາງອອ້ມ ເຊັ່ນ ຕຸລາການສານສູງສຸດຂອງອະເມຣິກາ ຕອ້ງຜາ່ນການອະນຸມັດ ໂດຍວຸດທິສະພາຊື່ງມາຈາກການເລືອກຕັ້ງ ຈາກປະຊາຊົນອີກໂສດນື່ງ

**ໃນຍຸກປັດຈຸບັນ**-ຊື່ງເປັນຍຸກທີ່ມີການປົກຄອງແບບປະຊາທິປະໄຕເປັນຫລັກ ການຈັດລະບຽບການ ເມືອງ ຫຼື ການສາ້ງສັງຄົມການເມືອງແບບປະຊາທິປະໄຕນັ້ນຈະປະກອບດວ້ຍສວ່ນທີ່ເປັນຣັຖທັມ ນູນສະຖາບັນການເມືອງ ເຊັ່ນ ພັກການເມືອງ ກະບວນການທາງການເມືອງຄືການເລືອກຕັ້ງຈັ່ນມີ ສະພານິຕິບັນຍັດ ແລະມີການຕັ້ງຝາ່ຍການບໍຣິຫານຊື່ງໄດ້ແກ່ຄນະຣັຖມົນຕຣີ ສວ່ນຕຸລາການນັ້ນ ອາດຈະບໍ່ເຫັນເດັ່ນຊັດໜັກ ເພາະໂດຍປົກກະຕິຕຸລາການ ມັກຈະເປັນສະຖາບັນພິເສດ ເນື່ອງຈາກ ເປັນວິຊາຊີບສະເພາະ-ແຕ່ປະເດັນຢູ່ທີ່ວາ່ການສະຖາປານາ ສະຖາບັນການເມືອງແບບປະຊາທິ ປະໄຕ ຊື່ງຖືວາ່ເປັນການພັທນາການເມືອງ ເພື່ອຕອບສນອງຕໍ່ຄວາມຕື່ນຕົວທາງການເມືອງໂດຍ ປະຊາຊົນຮຽກຮອ້ງສິດທິໃນການມີສວ່ນຮວ່ມອາດຈະບໍ່ສຳພັດຜົນ ທັງນີ້ເນື່ອງຈາກການສະຖາປາ ນາສະຖາບັນທາງການເມືອງນັ້ນ ຈຳເປັນຕອ້ງມີຖານອັນໝັ້ນຄົງໂດຍມີຖານທີ່ສຳຄັນສາມສວ່ນ

**ອັນໄດ້ແກ່ວັທນະທັມການເມືອງແບບປະຊາທິປະໄຕ**

ຊຶ່ງຈະຕ້ອງມີການເນັ້ນເຖິງຫລັກເສຣີພາບແລະການສເມີພາບ ຣວມຕຣອດທັງການມີຄ່ານິຍົມແລະສະຖານທີ່ສອດຄ່ອງກັບຣະບົບເຊັ່ນການມີໃຈນັກກິລາ-ຮູ້ແພ້ຮູ້ຊະນະ ການໃຊ້ສຽງຂ້າງຫລາຽໃນການຫາຂໍ້ຍຸຕິໃນຂໍ້ຂັດແຍ່ງ ການເຄົາຣົບສິດທິສຽງຂ້າງນ້ອຍ ການອົດທົນອົດກັ້ນຕໍ່ການສະແດງຄວາມຄິດເຫັນທີ່ແຕກຕ່າງ ການເຄົາຣົບສິດທິຂັ້ນພື້ນຖານຂອງປະຊາຊົນທົ່ວໆໄປ ການຕໍ່ສູ້ເພື່ອສິດທິຂອງຕົນເອງແລະການເຄົາຣົບສິດທິຂອງຄົນອື່ນ ເມື່ອໃດກໍ່ຕາມທີ່ພື້ນຖານດັ່ງກ່າວນີ້ຂາດຫາຍໄປ ການສະຖາປານາສະຖາບັນປະຊາທິປະໄຕ ຣວມທັງກະບວນການປະຊາທິປະໄຕ ກໍ່ຈະຢູ່ບົນຖານທີ່ຂາດຄວາມໝັ້ນຄົງ ບໍ່ສາມາດດຳເນີນຕໍ່ໄປໄດ້

ຣະບົບການປົກຄອງແບບປະຊາທິປະໄຕ-ຈະດຳເນີນໄປໄດ້ນັ້ນ ຍັງຈະຕ້ອງໃຫ້ຄວາມສຳຄັນ ກັບ **ຫລັກນິຕິທັມ**-ເພາະສະນັ້ນຄືຫລັກປະກັນຄວາມຍຸຕິທັມໃນສັງຄົມ ເຣີ້ມຕັ້ງແຕ່ກະບວນການອອກກົດໝາຽ ການບັງຄັບກົດໝາຽແລະກະບວນການຍຸຕິທັມຕາມຫລັກສາກົນ ເມື່ອໃດກໍ່ຕາມທີ່ມີການລະເມີດຕໍ່ຫລັກນິຕິທັມ ຄວາມຊອບທັມແລະຄວາມສັກສິດຂອງກົດໝາຽ ແລະຣະບຽບການປົກຄອງແບບປະຊາທິປະໄຕ ກໍ່ຈະຖືກກະທົບຢ່າງໜັກ ນອກຈາກທີ່ກ່າວມາຍັງມີສ່ວນຂອງ-**ຈະຣິຍະທັມ** ຜູ້ດຳຣົງຕຳແໜ່ງທາງການເມືອງ ຈະຕ້ອງມີສິນທັມແລະຈະຣິຍະທັມ ມີມາຣະຍາດທາງການເມືອງມີຄວາມເປັນຜູ້ດີທາງການເມືອງ ເມື່ອໃດກໍ່ຕາມທີ່ຜູ້ປະຕິບັດການທາງການເມືອງ ສໍ້ຣາດບັງຫລວງສູ່ແຜ່ອຳນາດລະເມີດກົດໝາຽ ຣວມຕຣອດທັງບໍ່ໃຊ້ເຫດໃຊ້ຜົນໃນການເຈຣະຈາພາທີ ບໍ່ໃຊ້ຄວາມຮູ້ທາງວິຊາແລະການຄຳນຶງເຖິງປະໂຍດສ່ວນຣວມ ໃນການວາງນະໂຍບາຍຫຼືການໃຊ້ຊັພຍາກອນທຳມະຊາດ ຄວາມໜ້າເຊື່ອຖືແລະຄວາມຊອບທັມ ຂອງຜູ້ດຳຣົງຕຳແໜ່ງທາງການເມືອງ ທາງການເມືອງກໍ່ຈະຂາດຫາຽໄປ

**ສັງຄົມໃດກໍ່ຕາມ**-ທີ່ຄົນສ່ວນໃຫ່ຽເບີດສັດທາໃນຣະບອບ ທັງການເຂົ້າສູ່ຕຳແໜ່ງອຳນາດແລະໃຊ້ຄ້າງແຄງໃຈໃນຄວາມສັກສິດແລະຄວາມໜ້າເຊື່ອຖືຂອງກົດໝາຽ ຣະບົບນັ້ນກໍ່ຈະຖືກຈຸດອັນຕຣາຍແລະສິ່ງທີ່ເຫັນໄດ້ຊັດ ຄື ຄົນໃນສັງຄົມດັ່ງກ່າວນັ້ນຈະບໍ່ຟັງເຫດຟັງຜົນ ຈະບໍ່ເຄົາຣົບກະຕິກາ ຈະມີຄວາມພະຍາຍາມເອົາຊະນະຄັດຄ້ານ ທັງໃນວາດທະກັມແລະການກະທັມ ສະພາບດັ່ງກ່າວນັ້ນສະທ້ອນເຖິງຣະບຽບການເມືອງທີ່ວ່າງເປົ່າ ແລະພືນໃຫ່ຽແຫ່ງເສຖກິດສັງຄົມທີ່ຂາດພອ້ມທີ່ຈະແຕກເປັນສ່ຽງ ໆ ເມື່ອໃດກໍ່ຕາມທີ່ຄົນປະຈັນໜ້າກັນດວ້ຍອາຣົມ ບໍ່ເຄົາຣົບນັບຖືຊຶ່ງກັນແລະກັນ ແບ່ງເປັນພັກເປັນຝ່າຍຢ່າງເຫັນເດັ່ນຊັດ ຈົ່ນເບີດທາງທີ່ຈະອອມຊອມກັນໄດ້ນັ້ນ ຄື ຈຸດວິກິດທີ່ສຳຄັນທີ່ສຸດ ຂອງຣະບຽບທາງການເມືອງຫຼືການຄົງຢູ່ຂອງສັງຄົມການເມືອງ

**ໃນສະພາວະດັ່ງກ່າວນີ້** ແນວໂນ້ມຂອງການທີ່ຈະໃຊ້ກຳລັງເຂົ້າຕໍ່ສູ້ກັນຈະມີສູງ ແລະມັກຈະລົງເອີ່ຍດວ້ຍການເສັຽຊີວິດແລະເລືອດເນື້ອ ຈົ່ນບາ້ນເມືອງມີລັກສະນະເປັນອະນາທິປະໄຕ ຊຶ່ງຈະຕອ້ງອາສັຍຕົວບຸກຄົນເຂົ້າມາແກ້ໄຂສະຖານະການ ຈັດຣະບຽບການເມືອງຂື້ນໃໝ່ ເພື່ອໃຫ້ສັງຄົມການເມືອງນັ້ນ ສາມາດດຳເນີນຕໍ່ໄປໄດ້ໂດຍຢູ່ຮ່ວມກັນໂດຍສັນຕິເຄົາຣົບກະຕິກາໂດຍທຸກຝ່າຍ ສະພາບສັງຄົມທີ່ວິກິດດັ່ງກ່າວມານີ້ ເກີດຂື້ນໃນປະວັດສາດນັບຄັ້ງບໍ່ຖວ້ນ

ບໍ່ວ່າໃນຢຸໂຣບ ຫຼື ເອເຊັຽ ຫຼືທີ່ອື່ນໆ ປະເດັນສຳຄັນກໍ່ຄື ໄດ້ມີການຮຽນຮູ້ບົດຮຽນ
ຈາກປະວັດສາດຫລາຽນອັຍພຽງໃດ

<u>**ອົງຄວາມຮູ້ໃນການລ້ຽງດູເດັກໃນຄອບຄົວ -**</u>ທັງໂຮງຮຽນແລະຊຸມຊົນ ປະຕິຮູບອົງຄວາມຮູ້ແລະຈິດໃຈສູ່ສັງຄົມການເມືອງ ຂອງປະເທດຍຸກໃໝ່-ຂ້າພະເຈົ້າເຊື່ອຢູ່ຢ່າງນຶ່ງວ່າ ຫລັກຖານໃນການສ້າງປະເທດ ຄື ການວາງຫລັກຖານການສຶກສາສຳຫລັບເຍົາວະຊົນ ໃຫ້ມີຄຸນນະພາບແລະເທົ່າທີ່ພົບເຫັນນັ້ນ ການພັທນາທາງດ້ານຈິດໃຈນັ້ນມີນອັຍຫລາຽ ຖ້າຖາມເຖິງອົງຄວາມຮູ້ຍຸກໃໝ່ ຄືການສອນໃຫ້ເດັກຮູ້ຈັກຄິດເປັນທັມເປັນຫລັກ ດັ່ງນັ້ນຣັຖບານແລະທຸກນວ່ຍຂອງສັງຄົມຈຳເປັນທີ່ຈະຕອ້ງຊວ່ຍກັນປະຕິຮູບການສຶກສາໃໝ່ ໂດຍສະເພາະການພັທນາດ້ານຈິດໃຈ ຕອ້ງຜລິດຊື່ໜັງສືສົ່ງເສີມການພັທນາຊີວິດ ປະເພດທາງດ້ານຄຸນນະທັມ ຈະອີຍະທັມໄປດວ້ຍ ຊຶ່ງຈະຊວ່ຍທຳໃຫ້ຫລັກຖານຂອງສັງຄົມເຂັ້ມແຂງ ເປັນສັງຄົມປະເທດທີ່ໝັ້ນຄົງ

<u>**ຄຸນຄ່າພື້ນຖານໃນ -16 - ໂຄງການສຳຫລັບເຍົາວະຊົນ - ມີດັ່ງຕໍ່ໄປນີ້**</u>

(1)ຄວາມເມດຕາສົງສານແລະການເຫັນອົກເຫັນໃຈຜູ້ອື່ນ(2)ການຮວ່ມມື(3)ຄວາມກ້າຫານ
(4)ຄວາມຕັ້ງໃຈແລະການອຸທິດຕົນ(5)ຄວາມໂປ່ງສັຍ(6)ການໃຫ້ຄວາມຊວ່ຍເຫລືອຄົນອື່ນ
(7)ຄວາມສື່ສັດແລະຄວາມຊື່ຕົງ(8)ການມີອາຣົມຂັນ(9)ຄວາມເປັນອິສຣະແລະຄວາມໝັ້ນໃຈໃນຕົນເອງ(10)ຄວາມຈົ່ງຮັກພັກດີ(11)ຄວາມອົດທົນ(12)ຄວາມພາກພູມໃຈ
(13)ການປັບຕົວເຂົ້າກັບສະຖານະການ(14)ການໃຫ້ກຽດສັດຕຣີ(15)ຄວາມຮັບຜິດຊອບ
(16)ຄວາມມີໃຈເປັນກາງ

ແຕ່ໃນທີ່ນີ້ຂ້າພະເຈົ້າຈະຂໍເວົ້າເຖິງຄວາມຊື່ສັດແລະຄວາມຊື່ຕົງກອ່ນ
ເພາະສັງຄົມເຮົາອອ່ນແອເຣື້ອງນີ້ຫລາຽ

<u>**ຄວາມຊື່ສັດແລະຄວາມຊື່ຕົງນັ້ນມັນຄືອັນໃດ**</u>-ເຮົາຄົ້ນພົບຄວາມຊື່ສັດ ເມື່ອເຮົາເວົ້າຄວາມຈິງ ແລະປະຕິບັດຕໍ່ຄົນອື່ນດວ້ຍຄວາມຍຸຕິທັມ ເຮົາສະແດງຄວາມຊື່ສັດຕໍ່ເຮົາເອງ ໃຫ້ຍືດໝັ້ນໃນຄຸນຄ່າແຫ່ງຄຸນທັມຂອງເຮົາເອງ

<u>**ເປັນຫຍັງຄວາມຊື່ສັດແລະຊື່ຕົງຈຶ່ງມີຄວາມສຳຄັນ**</u>-ຊາວອະເມຣິກັນພາກພູມໃຈ ໃນຄວາມຊື່ສັດແລະຄວາມຊື່ຕົງຂອງພວກເຂົາເຈົ້າເອງ ເຮົາເຊື່ອວ່າຣັຖບານແລະເພື່ອນບາ້ນຂອງເຮົາຊື່ສັດ ຄຳເວົ້າຂອງເຮົາຄືຂໍ້ຜູກມັດຂອງຕົວເຮົາເອງ <u>**ສັງຄົມຂອງເຮົາ**</u>-ຕັ້ງຢູ່ພື້ນຖານຂອງຮູບແບບ ຫຼື ການເປັນແບບຢ່າງ ເຊັ່ນ ນັກການເມືອງສະແດງແລະນັກກິລາ ຊຶ່ງເປັນແບບຢ່າງໃຫ້ແກ່ເຮົາ ເພາະການສະແດງອອກຂອງຕົວຕົ້ນແບບຕາ່ງ ໆ ໃນທຸກວັນ ຜົນທຳໃຫ້ເຮົາຊື່ສັດແລະຊື່ຕົງນອ້ຍລົງ ເຮົາຈະພົບແບບຢ່າງການສະແດງອອກ ຂອງຄວາມຊື່ສັດໄດ້ຢ່າງທີ່ໄດ-**ເມື່ອຄັ້ງ**-ທີ່ທາ່ນຍັງເປັນເດັກໃຜເປັນແບບຢ່າງອັນດີ ທີ່ກຽ່ວກັບຄວາມຊື່ສັດແລະຄວາມຊື່ຕົງໃຫ້ແກ່ທາ່ນ ທາ່ນໄດ້ມີສວ່ນຮວ່ມກັບສັງຄົມທຸກວັນນີ້ຂອງທາ່ນ ຫຼື ບໍ່-<u>**ຄວາມຊື່ສັດ**</u>-ເປັນພື້ນຖານຂອງຄວາມໄວ້ວາງໃຈ ຄວາມໄວ້ວາງໃຈເປັນພື້ນຖານຂອງຄວາມສຳພັນທີ່ດີ-ແຕ່ຂາດຄວາມໜາ້ໄວ້ວາງໃຈບໍ່

**<u>ພວກໜຸ່ມນ້ອຍ</u>** -ອາດຈະມີບັນຫາໃນການແຍກແຍະຣະຫວ່າງຄວາມຈິງກັບຈິນຕະນາການ ພວກເຮົາອາດຈະພາດທີ່ຈະສແດງຄວາມຈິງ ເພາະພວກເຮົາຍັງບໍ່ໄດ້ຮັບການພັທນາ ຄວາມສາມາດໃນການແຍກແຍະໄດ້ ເຂົາເຈົ້າອາດຈະເຊື່ອວ່າການປຽ່ນແປງຄວາມຈິງ ໃນຄວາມຄິດກໍ່ເທົ່າກັບເປັນການປຽ່ນຄວາມຈິງພາຍນອກດວ້ຍ ຄວາມຊື່ສັດຈິ່ງຢູ່ໃນພວກໜຸ່ມນອ້ຍຫລາຽກົ່ວໜຸ່ມໃຫ່ຽ ພວກເຮົາຕອ້ງມີປະສົບປະການຂອງຄວາມຊື່ສັດກອ່ນ ເພື່ອຈະສາມາດຮຽນຮູ້ທີ່ຈັດກັບມັນໄດ້

ຄວາມຊື່ສັດແລະຄວາມຊື່ຕົງມີຄຸນຄ່າແກ່ການບໍາຣຸງຮັກສາ ຫຼື ເວົ້າຄຸຍກັບພວກໜຸ່ມນອ້ຍກຽ່ວກັບຄວາມຄິດທີ່ຢູ່ຂາ້ງລຸ່ມນີ້ ແລ້ວເບິ່ງຕື່ວ່າ ເຂົາເຈົ້າຄິດເຫັນເປັນຢາ່ງໃດ

ຄວາມຊື່ສັດຄືອັນໃດ ? ອັນໃດຄືຄວາມແຕກຕາ່ງຣະຫວາ່ງຄວາມຈິງ ກັບການອື້ຕົວະ ເຄີຍມີໃຜບອກທາ່ນ ກຽ່ວກັບບາງສິ່ງບາງຢາງ ? ຖາ້ເຄີຍມັນທໍາໃຫ້ຮູ້ສຶກຢາ່ງໃດ ? ທາ່ນຍັງໄວ້ວາງໃຈຄົນໆນັ້ນ ທີ່ເຂົາເຈົ້າຈະເວົ້າຄວາມຈິງກັບທາ່ນໃນຕອນນີ້ບໍ ? ແມ່ນຫຼືບໍ່ຢາ່ງໃດ ? ລອງເວົ້າຄຸຍກັນກຽ່ວກັບຄໍາໝັ້ນສັນຍາ ທີ່ພວກໜຸ່ມນອ້ຍໄດ້ເຄີຍສັນຍາໄວ້ກັບພວກເຂົາເຈົ້າ ໃນຄໍາສັນຍານັ້ນຈິງຈັງຢາ່ງໃດ ທາ່ນຈະຮູ້ສຶກຢາ່ງໃດ ເມື່ອບາງຄົນຜິດສັນຍາ ທາ່ນເຄີຍວິຕົກກັງວົນທີ່ຈະບອກຄວາມຈິງ ກຽ່ວກັບບາງສິ່ງບາງຢາ່ງບໍ -ໃຜຄືຄົນທີ່ຊື່ສັດທີ່ສຸດເທົ່າທີ່ທາ່ນຮູ້ຈັກ ? ທາ່ນຮູ້ໄດ້ຢາ່ງໃດວາ່ເຂົ້າຊື່ສັດ ? ທາ່ນຮູ້ສຶກຢາ່ງໃດກຽ່ວກັບບຸກຄົນໆນັ້ນ

**<u>ພັທນາຮັກສາທາງພາສາ ແລ້ວເວົ້າຄຸຍກັນຕໍ່ເຣື່ອງ</u>**

ຄວາມຊື່ສັດແລະຄວາມຈົ່ງຮັກພັກດີ ໂດຍໃຊ້ຄໍາສັບຂາ້ງລຸ່ມນີ້

1-ຄວາມຈິງໃຈ-2-ຄວາມໄວ້ວາງໃຈ-3-ຄວາມເພີ້ຟັນ-4-ຄວາມໜາ້ເຊື່ອຖື-5-ຄວາມຊື່ສັດ -6-ເວົ້າຄວາມຈິງ-7-ຄວາມຊື່ຕົງ-8-ເວົ້າບໍ່ຈິງ-9-ຄໍາສັນຍາ-10-ບໍ່ໜາ້ໄວ້ວາງໃຈ-

**<u>ກິດຈະກັມສໍາຫລັບໜຸ່ມນອ້ຍທຸກວັຍ</u>**

ໃຊ້ວັນນະຄະດີ-ຊວ່ຍໃຫ້ໜຸ່ມນອ້ຍສາມາດແຍກແຍະ ຣະຫວາ່ງຄວາມເປັນຈິງກັບຄວາມເພີ້ຟັນ ເພາະໜຸ່ມນອ້ຍບໍ່ມີປະສົບປະການເປັນພື້ນຖານ ຍັງໜຸ່ມນອ້ຍຍັງມີຄວາມລໍາບາກ ທີ່ຈະກໍາໜົດຂີດເຈນລົງໄປວາ່ ອັນໃດເປັນສິ່ງທີ່ຈິງແລະອັນໃດເປັນສິ່ງທີ່ບໍ່ຈິງເຊັ່ນ ໜຸ່ມນອ້ຍບໍ່ຮູ້ຫລອກວາ່ໝາປາ່ສາມາດເຜົາບາ້ນໃຫ້ເພໄດ້ບໍ່ ເພາະເຂົາເຈົ້າບໍ່ມີປະສົບປະການກຽວກັບໝາປາ່ ສວ່ນໜຸ່ມນອ້ຍໃນຣະຫວາ່ງ-7-ປີນັ້ນ ພວກເຂົາເຈົ້າພໍຈະມີຂໍ້ມູນແມ່ ທີ່ຈະຊອ່ຍໃຫ້ເຮີ່ມແຍກແຍະໄດ້ຫຼື ອາດຈະຫຼີ້ນເກມທີ່ສະແດງເຖິງຄວາມຈິງກັບຈິນຕະນາການ ໂດຍໃຫ້ໜຸ່ມນອ້ຍມີກະດານວົງກົມສີແດງ ແລະສີຂຽວແລ້ວໃຫ້ສີຂຽວ "ແທນຕໍ່ໄປ" ແລະໃຫ້ສີແດງຢຸດ ເພື່ອໃຫ້ສີຂາວເວົ້າຄອບງັບ ເຮີ່ມໂດຍການເຫຼົ່າເຣື່ອງທີ່ສາ້ງຂື້ນ ແລະໃຫ້ໜຸ່ມນອ້ຍຍົກປາ້ຍສີຂຽວໄວ້ ຈົນກະທັ້ງເຫັນວາ່ມີບາງຈຸດທີ່ເປັນສິ່ງບໍ່ຈິງ ກໍ່ໃຫ້ເຂົາເຈົ້າຍົກປາ້ຍສີແດງ ເພື່ອບອກໃຫ້ທາ່ນຢຸດຫຼີ້ນຕໍ່ໄປເຣື່ອຍໆ ເພື່ອຈະຊອ່ຍໃຫ້ພວກໜຸ່ມນອ້ຍຄອ່ຍໆຮຽນຮູ້ແລະແຍກແຍະຄວາມເປັນຈິງກັບຈິນຕະນາການໄດ້

-ໃຫ້ພວກໜຸ່ມນອ້ຍເວົ້າຄຸຍກັນຫຼືສາ້ງສະຖານະການ ຕາມໜັງສືທີ່ພວກເຂົາເຈົ້າໄດ້ອາ່ນມາໃຫ້ພວກໜຸ່ມນອ້ຍອະທິບາຍວາ່

ອັນໄດບໍ່ຈິງແລະອັນໄດທີ່ຖືກແຕ່ງຂຶ້ນຫຼືອາດຈະໃຫ້ເຂົາເຈົ້າເຫຼົ່າເຣື້ອງທີ່ເປັນເຣື່ອງ ຈິນຕະນາການກ່ອນ ແລ້ວເຫຼົ່າເຣື້ອງທີ່ເປັນຈິງຄັ້ງນຶ່ງກໍ່ໄດ້-ເມື່ອໜຸ່ມນອ້ຍເຣີ່ມບິດເບືອນຄວາມຈິງ ຈົ່ງຊ່ອຍເຂົາເຈົ້າໃຫ້ພະຍາຍາມຮັກສາໄວ້ ຊຶ່ງຄວາມເປັນຈິງຕອ້ງອະທິບາຍໃຫ້ພວກເຂົາເຈົ້າຮູ້ ເຖິງຄວາມສຳຄັນຂອງການໃຫ້ຄວາມຈິງ ແລະເຊື່ອໝັ້ນໃນສິ່ງທີ່ເຂົາເວົ້າອອກໄປ

**<u>ການສນັບສນູນໃຫ້ໜຸ່ມນອ້ຍມີຄວາມເຊື່ອໝັ້ນ</u>**-ເມື່ອຄວາມເຊື່ອຂອງເຂົາເຈົ້ານັ້ນ ມີຄວາມແຕກຕ່າງຈາກຄົນອື່ນ ຢ່າໄປບັງຄັບໃຫ້ເຂົາເຈົ້າຄິດເໝືອນຄົນອື່ນ ຖ້າຄວາມຄິດຂອງເຂົາເຈົ້າບໍ່ດີພໍຈົ່ງຊ່ອຍເຂົາເຈົ້າໃຫ້ຄ່ອຍໆຄິດຢ່າງມີເຫດຢ່າງມີຜົນຫລາຍຂຶ້ນ ໂດຍບໍ່ໃຫ້ຄຽດແຄ້ນເຂົາເຈົ້າ ເພື່ອໃຫ້ເຂົາເຈົ້າສາມາດຢືນຢັນໃນສິ່ງທີ່ເຂົາເຈົ້າເຊື່ອໝັ້ນ

## <u>ກິດຈະກັມສຳຫລັບໜຸ່ມໃຫ່ຍ</u>

**<u>ເມື່ອໜຸ່ມໃຫ່ຍເຫຼັ້ນເກມໝາກດາມ</u>**-ຈົ່ງເວົ້າເຖິງຄວາມສຳຄັນຂອງການເຫຼັ້ນຢ່າງເປັນທັມແລະຊື່ສັດຈະເກີດອັນໄດຂຶ້ນ ຖ້າມີໃຜບາງຄົນຂີ້ຫຼັກ-ຫຼືຖ້າທ່ານຂີ້ຫຼັກເພື່ອທີ່ຈະຊະນະ ທ່ານຈະໄດ້ເປັນທີ່ແທ້ຈິງຫຼືບໍ່ **<u>ຊ່ອຍໃຫ້ໜຸ່ມນອ້ຍ</u>**-ເຫັນຜົນກະທົບຣະຍະຍາວ ທີ່ມາຈາກຄວາມບໍ່ຊື່ສັດໂດຍການສະແດງໃຫ້ເຂົາເຈົ້າເຫັນ ເຖິງສະຖານະການນັ້ນໆ ເຊັ່ນ ຖ້າທ່ານຢືນເທິງປາຍນີ້ວຕີນ ເມື່ອເຂົ້າມາວັດສ່ວນສູງໃນປີນີ້ ທ່ານຈະສາມາດຢືນເທິງນີ້ວຕີນ ຂອງທ່ານໄດ້ຕຣອດໄປຕັ້ງແຕ່ເວລານີ້ຫຼື

## <u>ກິດຈະກັມສຳຫຼັບໜຸ່ມນອ້ຍທຸກວັຍ</u>

**<u>ການທຳງານຣ່ວມກັບຄອບຄົວ</u>**-ແນວຄິດສຳຫລັບນຳເອົາໄປໄຊ້ຢູ່ເຮືອນ ຕອ້ງສົ່ງເສີມໃຫ້ໜຸ້ມນອ້ຍເວົ້າກຽ່ວກັບສິ່ງທີ່ເຂົາເຈົ້າເຊື່ອແນ່ວາ່ ມັນຈະແຕກຕາ່ງຈາກສິ່ງທີ່ທ່ານເຊື່ອກໍ່ຕາມ ທ່ານອາດຈະຢາກປັບຄວາມຄິດເຂົ້າໃຫ້ຕົງ ແຕ່ຢ່າຄາດຫວັງ ໃຫ້ເຂົາເຈົ້າເວົ້າບາງສິ່ງບາງຢ່າງ ທີ່ທ່ານຢາກຈະໄດ້ຍິນເພາະເຂົາເຈົ້າອາດຈະດື້ຣັ້ນ ແຕ່ນັ້ນກໍ່ເປັນພື້ນຖານສຳຫລັບຄວາມຊື່ສັດຕໍ່ໄປ ເຊັ່ນດຽວກັນ-ຢ່າຄາດຫວັງໃຫ້ໜຸ່ມນອ້ຍເຮັດບາງຢ່າງ ທີ່ພວກເຂົາເຈົ້າເສັຽໃຈຖ້າເຂົາເຈົ້າບໍ່ໄດ້ເຮັດຜິດຫຼືຢ່າໃຫ້ໜຸ່ມນອ້ຍເຂົ້າໄປຈູບໃຜ ຖ້າເຂົາເຈົ້າບໍ່ຕອ້ງການ ການໃຫ້ພວກໜຸ່ມນອ້ຍໄດ້ສະແດງ ສິ່ງໄຮ່ປະໂຍດເຫຼົ່ານີ້ຈະເປັນເຫດໃຫ້ເຂົາເຈົ້າພັທນາ ຄວາມບໍ່ຊື່ສັດຂອງເຂົາເຈົ້າຫລາຍກົ່ວ ແຕ່ຈົ່ງເປັນແບບຢ່າງຂອງຄວາມຊື່ສັດ ຊຶ່ງເປັນສິ່ງທີ່ທ່ານຢາກໃຫ້ເຂົາເຈົ້າລຽນແບບເຖິດ-ຈົ່ງເປັນແບບຢ່າງທີ່ດີຂອງຄວາມຊື່ສັດ ຢ່າບອກເພື່ອນບາ້ນວາ່ທ່ານມັກສິ່ງທີ່ເຂົາເຈົ້າເຮັດກັບສ່ວນດອກໄມ້ຂອງເຂົາເຈົ້າ ແຕ່ພໍເຂົ້າມາໃນບາ້ນກັບບອກວາ່ມັນບໍ່ໄດ້ເຣື້ອງເລີຍ ຖ້າສະໝຽນປຽ່ນເງິນໃຫ້ທ່ານຜິດ-ທ່ານຈົ່ງຄືນເງິນນັ້ນໃຫ້ແກ່ເຂົາເຈົ້າ ຖ້າບໍຣິສັດເຂເປີ້ນບໍ່ຮູ້ວາ່ທ່ານບໍ່ໄດ້ຮັບການບໍຣິການຂອງເຂົາເຈົ້າ ທ່ານຈົ່ງແຈ້ງໃຫ້ເຂົາເຈົ້າຊາບແລະຈາ່ຍເງິນໃຫ້ຖືກຕອ້ງເສັຽ-ເມື່ອທ່ານຈັບໄດ້ວາ່ໜຸ່ມນອ້ຍບໍ່ຊື່ສັດກຽ່ວກັບສິ່ງທີ່ເຂົາເຈົ້າຍັງບໍ່ໄດ້ພະຍາຍາມເຮັດມັນ ຈົ່ງສອນເຂົາເຈົ້າໃຫ້ເຂົ້າໃຈເຖິງຜົນຣະຍະຍາວທີ່ຕາມມາ ເຊັ່ນ ເມື່ອທ່ານເວົ້າຂີ້ຕົວະ ທ່ານຈະຕອ້ງຈົດຈຳລາຍຣະອຽດທຸກຢ່າງຂອງການຂີ້ຕົວະນັ້ນ ຈົ່ນຕຣອດຊີວິດຂອງທ່ານເລີຍ ອັນນີ້ມັນເປັນພາຣະທີ່ຍິ່ງໃຫ້ເລີຍລະ

## <u>ກົດຈະກັມຫລັບໝຸ່ມໃຫ່ຽ</u>

<u>**ເມື່ອໝຸ່ມໃຫ່ຽບໍ່ຊື່ສັດ**</u> ຈົ່ງຊ່ອຍຈັດຄວາມຄິດກ່ຽວກັບຄວາມຈິງ ຂອງສິ່ງທີ່ເກີດຂື້ນໂດຍບໍ່ຮ້າຽ ຫຼື ຕັດສິນເຂົາເຈົ້າບາງຄັ້ງ ພວກເຂົາເຈົ້າອາດຈະພຽງແຕ່ຕອ້ງການຢູ່ໃກ້ຊິດກັບທ່ານເທົ້ານັ້ນ ເມື່ອມີໂອກາດ -ຈົ່ງເວົ້າລຸຍກັນກັບພວກໝຸ່ມໆກ່ຽວກັບສິ່ງທີ່ສຳຜັດບໍ່ໄດ້ ຊຶ່ງອາດຈະຖືກຂະໂມຍໄປໄດ້ ເຊັ່ນ ມັນຈະການຂະໂມຍໃໝ່ທີ່ຈະທຳລາຍເຄດິດຂອງເພື່ອນ ຫຼື ຂອງຄົນອື່ນ ຊຶ່ງເປັນເຣື້ອງທີ່ກ່ຽວກັບຄວາມຊື່ສັດແລະຄວາມໄວ້ວາງໃຈ ຈົ່ງສນັບສນູນໃຫ້ໝຸ່ມນອ້ຍເວົ້າລຸຍກັນ ກ່ຽວກັບວິທີ ທີ່ເຂົາເຈົ້າຈະສະແດງຄວາມຊື່ສັດ ຫຼື ສະແດງຄວາມບໍຣິສຸດອອກມາ

### *ໜັງສືສຳຫລັບແບ່ງປັນໃຫ້ໝຸ່ມນອ້ຍໄດ້ຮັບຮູ້*

### *ຂໍ້ຄິດພິຈາຣະນາ*

<u>**ໝຸ່ມນອ້ຍທີ່ຖືກວິຈານເຣື້ອຍໆ**</u>-ອາດຈະຮຽນຮູ້ທີ່ຈະປະນາມ -<u>**ຫາກໄດ້ຮັບການຕໍ່ຕາ້ນ**</u> -ອາດຈະຮຽນຮູ້ທີ່ຈະຕໍ່ສູ້-<u>**ຫາກໄດ້ຮັບການຫົວເຣາະເຍາະເຍີຍ**</u> -ອາດຈະຕື່ນໂຕພອ້ມກັບຄວາມອີ້ອາຍ <u>**ຫາກໄດ້ຮັບຄວາມອັບອາຍ**</u> -ອາດຈະຕື່ນໂຕພອ້ມກັບຄວາມຮູ້ສຶກຜິດ -<u>**ແຕ່ໃຫ້ເຮົາມີຄວາມອົດກັ້ນ**</u> -ເພື່ອສອນເຂົາເຈົ້າໃຫ້ມີຄວາມອົດທົນ <u>**-ໃຫ້ເຮົາມີກຳລັງໃຈ**</u> -ເພື່ອສອນເຂົາເຈົ້າໃຫ້ມີຄວາມເຊື່ອໝັ້ນໃນຕົນເອງ<u>**-ການໃຫ້ເຂົາເຈົ້າມີຄວາມຊື່ສັດ**</u> -ເພື່ອສອນເຂົາເຈົ້າໃຫ້ມີຄວາມເປັນທັມ -<u>**ການໃຫ້ຄວາມປອດພັຍແກ່ໝຸ່ມນອ້ຍ**</u> -ກໍ່ເທົ້າກັບໃຫ້ຄວາມສັດທາ-<u>**ການໃຫ້ຄວາມຮັກແກ່ໝຸ່ມນອ້ຍ**</u> -ກໍ່ເທົ້າກັບໃຫ້ພຣະເຈົ້າແກ່ພວກເຂົາເຈົ້າ

ອັນທີ່ກ່າວມາຂ້າງເທິງນີ້ ເປັນພລັງທີ່ຍິ່ງໃຫ່ຽ
ບົດຄວາມຂ້າງຕົ້ນຣະບຸວ່າ ຕອ້ງໃຫ້ຄວາມສຳຄັນ ກັບຫລັກນິຕິທັມ
ກົດໝາຽນັ້ນ- ຄື ຫລັກປະກັນຄວາມຍຸຕິທັມ ໃນສັງຄົມ
ຫລັກປະກັນ ຄວາມຍຸຕິທັມ ຂອງກະບວນການຍຸຕິທັມ
ຕາມມາດຕະຖານສາກົນ ທີ່ເຈນີວາ ໂດຍການສນັບສນູນ
ຂອງ-un- ຄື ຣະບົບງານ ດັ່ງທີ່ບັນຍັດໃນຣັຖທັມນູນ
ຣັຖຕອ້ງຈັດຣະບົບງານ ຂອງກະບວນການຍຸຕິທັມ
ໃຫ້ມີປະສິດທິພາບໃນລາວ

**ປະເທດລາວຈຕອ້ງ ຈະເຣີນໄດ້ ຖ້າມີການປຣັບແປງ ມີຣັຖທັມນູນ**
**ມີຄວາມຍຸຕິທັມ ແລະມີສິດທິມະນຸສຍະຊົນ**

**ຈາກສູນກາງ ສັນພູໝອກ ທີ່ ນະຄອນວຽງຈັນ**

**ໃນນາມ ລາວອິສຣະ**